**ຂໍ້ແນະນຳໃນການຂໍວີຊາໄປເຄື່ອນໄຫວສາສະໜາໄລຍະສັ້ນຢູ່ໃຕ້ຫວັນ**

1. ໜັງສືຜ່ານແດນຕົ້ນສະບັບ ແລະ ສະບັບອັດສຳເນົາ: ໜັງສືຜ່ານແດນຕ້ອງຍັງມີອາຍຸນຳໃຊ້ແຕ່ 6 ເດືອນຂຶ້ນໄປ, ໃຫ້ອັດສຳເນົາໜ້າໜັງສືຜ່ານແດນ, ວີຊາທັງໝົດ ແລະ ບັນດາກາຈ້ຳເຂົ້າອອກເມືອງ (ຖ້າມີ).
2. ຕື່ມຂໍ້ມູນເຂົ້າໃນໃບແຈ້ງອອນໄລຂໍວີຊາຢູ່ໜ້າເວັບຊາຍ: https://visawebapp.boca.gov.tw (General Visa), ຫຼັງຈາກນັ້ນໃຫ້ປຼິ້ນອອກ, ຕິດຮູບ (ຮູບ 2 ໃບຂະໜາດ 4x6 ພື້ນຮູບສີຂາວໄດ້ຖ່າຍພາຍໃນເວລາ 6 ເດືອນ), ຜູ້ກ່ຽວຕ້ອງເຊັນໃສ່ເບື້ອງຫຼັງຂອງໃບແຈ້ງ.
3. ຈົດໝາຍເຊື້ອເຊີນຂອງຝ່າຍໃຕ້ຫວັນຕົ້ນສະບັບ.
4. ໜັງສືຜ່ານແດນຂອງຜູ້ເຊີນ (ຄົນໃຕ້ຫວັນ) ທີ່ມີລາຍເຊັນ (ສະບັບອັດສຳເນົາ).
5. ໃບອະນຸຍາດເຄື່ອນໄຫວຂອງຝ່າຍເຊີນ.
6. ໃບຢັ້ງຢືນກຳລັງເຮັດວຽກຢູ່ບໍລິສັດ ຫຼື ສັນຍາຈ້າງແຮງງານ, ເປັນພາສາຈີນ ຫຼື ພາສາອັງກິດທີ່ມີລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ ແລະ ໄດ້ປະທັບກາຂອງບໍລິສັດ.
7. ຖ້າຜູ້ຂໍວີຊາເປັນຜູ້ຮັບຜິດຊອບບໍລິສັດ, ຕ້ອງການພຽງແຕ່ໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດຢູ່ລາວ, ມີກາຈ້ຳ ແລະ ລາຍເຊັນຂອງຜູ້ເປັນເຈົ້າຂອງບໍລິສັດ (ໃບອະນຸຍາດດຳເນີນທຸລະກິດຕ້ອງໄດ້ແປມາເປັນພາສາຈີນ ຫຼື ພາສາອັງກິດແລ້ວມີລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ ແລະ ໄດ້ປະທັບກາຂອງບໍລິສັດ).
8. ຢືນຢັນຖານະການເງິນ (ປຶ້ມຝາກເງິນປະຢັດ). ຍື່ນສະບັບອັດສຳເນົາພ້ອມກັບຕົ້ນສະບັບເພື່ອສົມທຽບແລ້ວຈະສົ່ງຕົ້ນສະບັບຄືນ. ຖ້າໃບຢືນຢັນຖານະການເງິນເປັນພາສາລາວ ແມ່ນຕ້ອງໄດ້ແປມາເປັນພາສາຈີນ ຫຼື ພາສາອັງກິດ.
9. ຖ້າວ່າມອບສິດໃຫ້ຜູ້ອື່ນເຮັດໃຫ້, ຕ້ອງມີໜັງສືແນະນຳຂອງບໍລິສັດ, ຜູ້ໄດ້ມອບສິດຕ້ອງສະໜອງບັດປະຈຳຕົວຕົ້ນສະບັບ ແລະ ສະບັບອັດສຳເນົາ.
10. ອີງໃສ່ການກຳນົດຢູ່ຂໍ້ 5 ຂອງແຈ້ງການແນະນຳການປະຕິບັດກົດໝາຍວ່າດ້ວຍການເຮັດໜັງສືຜ່ານແດນ, ວີຊາຕໍ່ກັບຄົນຕ່າງປະເທດ, ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ ອາດຈະຮຽກ ຮ້ອງຜູ້ກ່ຽວທີ່ຂໍວີຊາຕ້ອງມາສຳພາດ ຫຼື ສະໜອງຕື່ມເອກະສານທີ່ກ່ຽວຂ້ອງຕ່າງໆ.
11. ຄ່າທຳນຽມ:

    ເຮັດດ່ວນແມ່ນ 75 ໂດລາສະຫະລັດ (ພາຍຫຼັງ 2 ວັນລັດຖະການ, ບໍ່ນັບມື້ມາສົ່ງເອກະສານ)

    ເຮັດທຳມະດາແມ່ນ 50 ໂດລາສະຫະລັດ (ພາຍຫຼັງ 5 ວັນລັດຖະການ, ບໍ່ນັບມື້ມາສົ່ງເອກະສານ)

Update ວັນທີ 14/12/2017